ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ເຈົ້າແຂວງ

ເລກທີ:..206.../ຈຂ.ບກ

ບໍ່ແກ້ວ, ວັນທີ:..22..ກຸມພາ2018

# ຄຳສັ່ງ

## ຂອງເຈົ້າແຂວງ ແຂວງບໍ່ແກ້ວ

## ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການລັກລອບນຳເຂົ້າ

## ສິນຄ້າ, ເຄື່ອງຂອງ ຕາມຊາຍແດນທີ່ບໍ່ຖືກຕ້ອງຕາມກົດໝາຍຢູ່ພາຍໃນແຂວງບໍ່ແກ້ວ.

ເຖິງ: ບັນດາທ່ານຫົວໜ້າພະແນກການ, ບັນດາທ່ານເຈົ້າເມືອງ, ຄະນະສະເພາະກິດທີ່ໄດ້ຮັບການແຕ່ງຕັ້ງ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງຕະຫຼອດຮອດອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງບໍ່ແກ້ວ.

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ68/ສພຊ, ລົງວັນທີ 14/12/2015
- ອີງຕາມ ກົດໝາຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ ປີ 2011.
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງການເຂົ້າ-ອອກ ສ ປ ປ ລາວ ແລະ ການຄຸ້ມຄອງຄົນຕ່າງປະເທດສະບັບເລກທີ 136/ນຍ, ລົງວັນທີ 25/5/2009.

ໃນໄລຍະຜ່ານມາ ຜູ້ປະກອບການທຸລະກິດຕ່າງໆ ແລະ ພໍ່ແມ່ປະຊາຊົນຊາວຄ້າ-ຂາຍຢູ່ພາຍໃນແຂວງບໍ່ແກ້ວສ່ວນໃຫຍ່ແມ່ນໄດ້ດຳເນີນທຸລະກິດຖືກຕ້ອງຕາມລະບຽບກົດໝາຍ ແລະ ໄດ້ມີການປະກອບສ່ວນເສຍພັນທະເຂົ້າງົບປະມານລັດຢ່າງຕັ້ງໜ້າເຮັດໃຫ້ເສດຖະກິດຂອງແຂວງມີການຂະຫຍາຍຕົວຂຶ້ນເປັນກ້າວໆ, ແຕ່ເຖິງຢ່າງໃດກໍ່ຕາມເຫັນວ່າຍັງມີຜູ້ປະກອບການດຳເນີນທຸລະກິດ-ພໍ່ຄ້າຊາວຂາຍ, ປະຊາຊົນຈຳນວນໜຶ່ງຍັງມີການເຂົ້າ-ອອກເມືອງບໍ່ຖືກຕ້ອງແລະມີການລັກລອບນຳເຂົ້າສິນຄ້າຈາກປະເທດເພື່ອນບ້ານເຂົ້າມາທີ່ບໍ່ຖືກຕ້ອງຕາມກົດໝາຍເປັນຈຳນວນຫຼວງຫຼາຍ, ມີການຫຼົບຫຼີກເສຍພາສີ ແລະ ພັນທະອື່ນໆ, ເຊິ່ງສ້າງຄວາມເສຍຫາຍໃຫ້ແກ່ເສດຖະກິດຂອງແຂວງ ແລະ ສ້າງຄວາມບໍ່ສະຫງົບຕາມຊາຍແດນ ພາໃຫ້ເກີດມີຄວາມຫຍຸ້ງຍາກສັບສົນໃຫ້ແກ່ການຄຸ້ມຄອງຂອງອຳນາດການປົກຄອງ ແລະ ມີຜົນກະທົບຕໍ່ກັບການຈັດເກັບລາຍຮັບເຂົ້າງົບປະມານຂອງລັດເສຍຫາຍເປັນຈຳນວນຫຼວງຫຼາຍ, ສະນັ້ນ ເພື່ອເຮັດໃຫ້ການນຳເຂົ້າສິນຄ້າ, ເຄື່ອງຂອງ, ຂອງບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບການທຸລະກິດນຳເຂົ້າ ສິນຄ້າເຄື່ອງຂອງ, ການເຂົ້າອອກເມືອງ ແລະ ການເດີນເຮືອໃຫ້ເຂົ້າສູ່ລະບຽບກົດໝາຍໃຫ້ຖືກຕ້ອງ, ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຕາມຊາຍແດນ.

## ເຈົ້າແຂວງ ອອກຄຳສັ່ງ:

1/ ການນຳເຂົ້າສິນຄ້າ, ເຄື່ອງຂອງທຸກປະເພດ ຂອງບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ ທີ່ນຳເຂົ້າມາ

ພາຍໃນເພື່ອມາຊົມໃຊ້ ແລະ ຈຳໜ່າຍຜ່ານແຂວງບໍ່ແກ້ວ ສາມາດນຳເຂົ້າໄດ້ສະເພາະດ່ານ ທີ່ທາງການໄດ້ກຳນົດໄວ້ເທົ່ານັ້ນ,ໂດຍໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ແລະຕ້ອງເສຍພາສີ-ອາກອນ ແລະ ພັນທະອື່ນໆ ຕາມທີ່ກົດໝາຍໄດ້ກຳນົດໄວ້ (ເວັ້ນເສຍແຕ່ກໍລະນີງົດເກັບ ຫຼື ຍົກເວັ້ນພາສີ ແລະ ພັນທະອື່ນໆ ທີ່ໄດ້ຮັບອານຸຍາດຕາມທີ່ກົດໝາຍກຳນົດ). ໃນກໍລະນີບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການນຳເຂົ້າສິນຄ້າ, ເຄື່ອງຂອງບໍ່ປະຕິບັດຕາມລະບຽບການດັ່ງກ່າວຂ້າງເທິງ, ມີການລັກລອບການນຳເຂົ້າບໍ່ຖືກຕ້ອງ, ຖ້າເຈົ້າໜ້າທີ່ກວດກາ ພົບເຫັນ ຈະຖືກດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

2/ ການນຳໃຊ້ເຮືອແພຕາມລຳແມ່ນ້ຳຂອງ: ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງຕາມຈຸດທາງການທີ່ກຳນົດໄວ້ໃຫ້; ຫ້າມນຳເອົາເຮືອໄປຂົນສົ່ງສິນຄ້ານຳເຂົ້າທີ່ບໍ່ຖືກຕ້ອງຢ່າງເດັດຂາດ, ການເຂົ້າ-ອອກເຮືອໃຫ້ຖືກຕ້ອງຕາມໂມງເວລາທີ່ທາງເຈົ້າໜ້າທີ່ດ່ານໄດ້ກຳນົດໄວ້ຄື:

- ການເດີນເຮືອ ແມ່ນອານຸຍາດໄດ້ແຕ່ 7 ໂມງ 00 ນາທີຫາ 18:00 ນາທີ, ໃນກໍລະນີຫາກຝ່າຝືນ ແລະ ກວດກາພົບເຫັນຈະຖືກດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.
- ເຮືອທຸກປະເພດກ່ອນຈະອອກ-ເຂົ້າທ່າທີ່ມີຈຸດປະສົງຈະຂ້າມໄປຝັ່ງໄທ ແລະ ມຽນມາຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ດ່ານ ຕມ ແລະ ເຈົ້າໜ້າທີ່ພາສີປະຈຳດ່ານ ຈຶ່ງສາມາດຂ້າມໄປຕ່າງປະເທດໄດ້ (ຍົກເວັ້ນເຮືອທີ່ນຳໃຊ້ລຽບຕາມຊາຍແດນແມ່ນ້ຳຂອງຝັ່ງລາວ); ຖ້າຫາກບຸກຄົນໃດໜຶ່ງ ຫຼື ຜູ້ປະກອບການບໍ່ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ,ຖ້າພົບເຫັນຈະຖືກດຳເນີນຄະດີຕາມກົດໝາຍ ຢ່າງເຂັ້ມງວດ.

3/ ການເຂົ້າ-ອອກເມືອງຂອງບຸກຄົນທຸກໆ ຄັ້ງຕ້ອງມີໜັງສືອະນຸຍາດຜ່ານແດນຈາກເຈົ້າໜ້າທີ່ດ່ານ ຕມ ໃຫ້ຄົບຖ້ວນ (ໃບຜ່ານແດນຊົ່ວຄາວ, ປຶ້ມໜັງສືຜ່ານແດນ), ໂດຍແຈ້ງຜ່ານດ່ານ ເຈົ້າໜ້າທີ່ຕຳຫຼວດກວດກາຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ກໍລະນີຫາກມີການລັກລອບເຂົ້າ-ອອກເມືອງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ອອກບໍ່ຖືກຕາມດ່ານທີ່ທາງການໄດ້ກຳນົດໄວ້, ຖ້າກວດກາພົບເຫັນ ຈະຖືກປັບໃໝ 100 ຫາ 500 ໂດລາສະຫະລັດຕໍ່ຄັ້ງ ຕໍ່ຄົນກໍລະນີມີການລະເມີດຫຼາຍຄັ້ງ ຈະຖືກດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງ.

4/ ບຸກຄົນ ແລະ ພາຫະນະໃດໜຶ່ງ ຫາກໄປຮັບຈ້າງຂົນສົ່ງສິນຄ້າ-ເຄື່ອງຂອງ ທີ່ນຳເຂົ້າບໍ່ຖືກຕ້ອງ (ສິນຄ້າເຄື່ອງຂອງທີ່ມີການລັກລອບຫຼົບຫຼີກພາສີ) ຖ້າເຈົ້າໜ້າທີ່ກວດກາພົບເຫັນການກະທຳຜິດແມ່ນຈະຖືກດຳເນີນຄະດີຕາມກົດໝາຍ ທີ່ກ່ຽວຂ້ອງ.

5/ ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ, ຫ້າງຮ້ານໃດຫາກນຳເຂົ້າສິນຄ້າ, ເຄື່ອງຂອງ ຫຼື ຮັບຊື້ສິນຄ້າເຄື່ອງຂອງທີ່ບໍ່ທັນໄດ້ເສຍພາສີ-ອາກອນຖືວ່າມີຄວາມຜິດຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

6/ ເຄຫາສະຖານທີ່ໃດ ຫາກສ້າງສິ່ງອຳນວຍຄວາມສະດວກ ໃຫ້ການຮ່ວມມື, ເປັນບ່ອນ ເກັບມຽນ, ຊຸກເຊື່ອງສິນຄ້າ,ເຄື່ອງຂອງທີ່ນຳເຂົ້າມາເພື່ອຫຼົບຫຼີກການເສຍພາສີ-ອາກອນ, ຖ້າເຈົ້າໜ້າທີ່ທີ່ກ່ຽວຂ້ອງກວດກາພົບເຫັນຖືວ່າມີຄວາມຜິດຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

7/ ອຳນາດການປົກຄອງທຸກຂັ້ນ, ພະນັກງານລັດຖະກອນຜູ້ໃດທີ່ໃຊ້ໜ້າທີ່ຕຳແໜ່ງ, ອຳນວຍຄວາມສະດວກ,ໃຫ້ການຮ່ວມມືໃນກໍລະນີໃດກໍ່ຕາມໃຫ້ແກ່ບຸກຄົນ,ນິຕິບຸກຄົນ, ຜູ້ປະກອບການໃນການລັກລອບການນຳເຂົ້າສິນຄ້າເຄື່ອງຂອງ, ພາຫະນະ, ການເຂົ້າ-ອອກເມືອງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຖືວ່າຜິດຕໍ່ລະບຽບກົດໝາຍ, ຖ້າພົບເຫັນຈະຖືກດຳເນີນຄະດີຕາມກົດໝາຍຢ່າງເຂັ້ມງວດ, ຕາມສະຖານໜັກ ຫຼື ເບົາຂອງການກະທຳຜິດ.

8/ ມອບໃຫ້ຄະນະສະເພາະກິດທີ່ໄດ້ຮັບການແຕ່ງຕັ້ງຕາມຂໍ້ຕົກລົງຂອງເຈົ້າແຂວງບໍ່ແກ້ວ ສະບັບເລກທີ